## ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ວັນທີ 8 ພຶສພາ 2005 ( 05 - 08 - 2005 )

# ເຊື່ອໃນພຣະເຈົ້າ

**ພຣະຄັມພີສຳລັບບົດຮຽນນີ້:** ( ປະຖົມມະການ. 17: 15-19, 18: 10-15, 21: 1-5 )

**ຂໍ້ພຣະຄັມພີທີ່ສຳຄັນ:** ປະຖົມມະການ. 17: 15-19, 18: 10-15, 21: 1-5

**ຄວາມຈິງໃນພຣະຄັມພີ:** ພຣະເຈົ້າຊົງຮັກສາສັນຍາທຸກຂໍ້ທີ່ພຣະອົງຊົງສັນຍາໄວ້, ເຖິງແມ່ນວ່າມະນຸດອາດຈະຄິດວ່າເປັນໄປບໍ່ໄດ້.

**ຜົນສະທ້ອນຕໍ່ຊີວິດ:** ເພື່ອຊ່ວຍໃຫ້ທ່ານດຳຣົງຊີວິດດ້ວຍຄວາມເຊື່ອໃນພຣະສັນຍາຂອງພຣະເຈົ້າ.

## ຂ້າພະເຈົ້າແລະຄອບຄົວຈະໝັ້ນໃຈໄດ້ຢ່າງໃດວ່າ ພຣະເຈົ້າຈະຮັກສາຄຳສັນຍາຂອງພຣະອົງ?

ອາດມີຫຼາຍຄັ້ງໃນຊີວິດທີ່ຍັງໜຸ່ມ ທີ່ພວກເຮົາໄດ້ຮັບຄວາມເຈັບປວດແລະເສັຽໃຈຍ້ອນມີຄົນບໍ່ໄດ້ເຮັດຕາມສັນຍາຂອງຕົນ. ມີບາງຄົນໃຫ້ຄຳໝັ້ນສັນຍາທີ່ວ່າງເປົ່າພໍພຽງແຕ່ໃຫ້ໄດ້ມາໃນສິ່ງທີ່ໃຈເຂົາປາຖນາ. ມີຄົນຈຳນວນອື່ນອີກທີ່ໃຫ້ຄຳສັນຍາພໍພຽງແຕ່ເຮັດໃຫ້ເວລານັ້ນເປັນທີ່ຊື່ນຊົມຍິນດີແລະອີກບໍ່ດົນເຂົາກໍລືມໄປ. ຍ້ອນບັນຫານີ້, ພວກເຮົາເດກໍເຄີຍເປັນແບບນັ້ນບໍ່? ຄືບໍ່ໄດ້ຮັກສາສັນຍາທີ່ໄດ້ສັນຍາກັບຜູ້ໃດຜູ້ນຶ່ງ? ດ້ວຍຄວາມເຂົ້າໃຈຢ່າງຖ່ອງແທ້ ພວກເຮົາອາດຈະໄວ້ໃຈຄົນໃດຄົນນຶ່ງທີ່ໄດ້ໃຫ້ສັນຍາກັບພວກເຮົາຢ່າງຊ້າງ ແລະສິ່ງນີ້ຈະສະທ້ອນໄປເຖິງຄວາມເຊື່ອໝັ້ນໃນຄຳສັນຍາຂອງພຣະເຈົ້າຕາມພຣະຄຳຂອງພຣະອົງຫລືບໍ່?.

ເມື່ອພຣະເຈົ້າໄດ້ໃຫ້ຄຳໝັ້ນສັນຍາແກ່ອັບຣາຮາມ ຄືຈະປະທານບຸດໃຫ້ແກ່ພັລຍາຂອງເພິ່ນທີ່ເຖົ້າແກ່ແລ້ວ, ອັບຣາຮາມບໍ່ຢາກຈະເຊື່ອເທົ່າໃດ. ແຕ່ເພິ່ນກໍໄດ້ຮຽນຮູ້ດ້ວຍຕົວເອງວ່າພຣະເຈົ້າໄດ້ຮັກສາຄຳສັນຍາຂອງພຣະອົງ, ເຖິງແມ່ນວ່າຕາມຄວາມຄິດຂອງມະນຸດຄິດວ່າເປັນໄປບໍ່ໄດ້ທີ່ຈະເປັນໄປຕາມນັ້ນ. ພວກເຮົາທັງຫຼາຍຄວນດຳຣົງຊີວິດຢູ່ໂດຍມີຄວາມເຊື່ອໝັ້ນໃນພຣະສັນຍາຂອງພຣະເຈົ້າຢູ່ສເມີ.

### 1. ພຣະເຈົ້າຈະປະທານສິ່ງທີ່ຕ້ອງການຕາມຄຳສັນຍາ: ( ປຖມກ. 17: 15-19 )

ຊື່ນັ້ນມີຄວາມໝາຍແນວໃດ? ບາງຄັ້ງ, ກໍເປັນເຣື່ອງໃຫຍ່. ໃນປະຖົມມະການ 17: 5, ໄດ້ບັນທຶກເຖິງການປ່ຽນຊື່ອັບຣາຮາມວ່າ " ເປັນບັນພະບຸຣຸດຂອງຄົນທັງຫຼາຍ " ເພື່ອຈະໄດ້ " ເປັນຜູ້ອອກໝາກຜົນ " ຊື່ຊາຣາຍ ມາເປັນຊາຣາ ຊຶ່ງທັງສອງຊື່ນີ້ມີຄວາມໝາຍວ່າ " ຍິງທີ່ສູງສັກ " ຫຼື " ເຈົ້າຍິງ " ຊຶ່ງແປມາຈາກພາສາເດີມທີ່ໝາຍເຖິງລູກສາວຂອງເຈົ້າຊີວິດ. ຊື່ທີ່ກ່າວມານີ້ແມ່ນມີຄວາມສຳພັນກັບພຣະສັນຍາຂອງພຣະເຈົ້າທີ່ຈະປະທານບຸດ ໃຫ້ແກ່ອັບຣາຮາມໂດຍຈະໃຫ້ເກີດກັບນາງຊາຣາ, ຜູ້ທີ່ຈະກາຍເປັນແມ່ຂອງຄົນທັງປວງແລະແມ່ຂອງກະສັດທັງຫຼາຍດ້ວຍ.

ອັບຣາຮາມບໍ່ເຄີຍເຫັນແລະບໍ່ເຄີຍໄດ້ຍິນເລີຍວ່າ ຜູ້ຊາຍທີ່ອາຍຸໄດ້ຮ້ອຍປີແລະເມັຽອາຍຸເກົ້າສິບປີສາມາດມີລູກໄດ້. ເພາະວ່າພັຣຍາຂອງລາວບໍ່ສາມາດຈະມີລູກໄດ້ເມື່ອນາງຍັງຢູ່ໃນວັຍສາວ ດັ່ງນັ້ນການທີ່ນາງຈະມີລູກເມື່ອອາຍຸແກ່ແລ້ວຈຶ່ງເປັນເຣື່ອງທີ່ໜ້າຫົວຂວັນ.

ອັບຣາຮາມກໍໄດ້ເຮັດເໝືອນກັບພວກເຮົາເມື່ອຂາດຄວາມເຊື່ອໃນຄຳສັນຍາຂອງພຣະເຈົ້າ. ລາວໄດ້ຕີຄວາມໝາຍຄຳສັນຍາຂອງພຣະເຈົ້າໃໝ່ ລົດຄ່າຄຳສັນຍາຂອງພຣະເຈົ້າລົງຕາມຄວາມໝາຍຂອງມະນຸດ. ຈາກຄຳຮຽກຮ້ອງຂອງຊາຣາ ລາວໄດ້ເປັນພໍ່ຂອງອິສມາເອນຮ່ວມກັບຄົນໃຊ້ຊາວອີຢິບຊື່ຮາກາ (ປຖກ 16). ດັ່ງນັ້ນເມື່ອໄດ້14 ປີ

ຜ່ານໄປແລ້ວ ເພິ່ນຈຶ່ງໄດ້ເວົ້າກັບພຣະເຈົ້າວ່າ, " ພໍພຽງແຕ່ອິສມາເອນສາມາດທີ່ຈະເປັນຜູ້ທີ່ພຣະອົງພໍພຣະທັຍ " ຄວາມໝາຍຂອງອັບຣາຮາມກໍຄືເພິ່ນຢາກຈະໃຫ້ອິສມາເອນໄດ້ເຮັດໃຫ້ຈຸດປະສົງຂອງພຣະເຈົ້າເກີດຜົນສຳເຣັດຕາມສັນຍາທີ່ພຣະອົງຊົງສັນຍາໄວ້.

ທ່ານຄົງຈະໄດ້ເຫັນແລ້ວວ່າອັບຣາຮາມໄດ້ເຮັດແນວໃດ? ຄືໄດ້ສັບປ່ຽນຄຳສັນຍາຂອງພຣະເຈົ້າທີ່ວ່າ " ພຣະເຈົ້າຈະຊ່ວຍຜູ້ເຊື່ອແລະໄວ້ວາງໃຈໃນພຣະອົງ " ແທນດ້ວຍ " ພຣະເຈົ້າຈະຊ່ວຍຜູ້ທີ່ຊ່ອຍຕົວເອງ " ໃນເມື່ອພຣະເຈົ້າໄດ້ໃຫ້ຄຳສັນຍາວ່າຈະປະທານບຸດໃຫ້ແກ່ອັບຣາຮາມແລ້ວ, ແລະພຣະອົງກໍຊົງໄດ້ສະແດງພຣະອົງໃຫ້ເຫັນໂດຍຜ່ານເທວະດານັ້ນແລ້ວວ່າພຣະອົງຈະປະທານໃຫ້ເພິ່ນກາຍເປັນຊົນຊາດໃຫຍ່, ແຕ່ອັບຣາຮາມໄດ້ເຮັດຕາມໃຈຕົນເອງເພາະບໍ່ມີຄວາມແນ່ໃຈໃນຄຳສັນຍາຂອງພຣະເຈົ້າແລະເພິ່ງຕົວເອງຫຼາຍກວ່າເພິ່ງພຣະເຈົ້າ.

ເຣື່ອງການບໍຣິຫານຢູ່ໃນໂບດຂອງພວກເຮົາກໍເຫມືອນກັນສ່ວນຫຼາຍແລ້ວແມ່ນອີງໃສ່ຄວາມສາມາດຂອງຜູ້ນຳທັງຫຼາຍ, ຄະນະກັມມະການ, ຫຼືແຜນການທີ່ພວກເຮົາວາງໄວ້ແລະເຊື່ອໃນຄວາມສາມາດຂອງຕົນເອງໃນການປ່ຽນແປງການດຳຣົງຊີວິດປະຈຳວັນ. ພຣະຜູ້ເປັນເຈົ້າອາດຈະເລືອກທີ່ຈະທຳພາຣະກິດຂອງພຣະອົງໂດຍຜ່ານສິ່ງທີ່ກ່າວມາຂ້າງເທິງນີ້ກໍໄດ້, ແຕ່ພຣະອົງຍັງມີຄວາມສາມາດທີ່ຈະປ່ຽນແປງຈິດວິນຍານທີ່ໄດ້ຫຼົງຫາຍໄປໃຫ້ມີການເກີດໃຫມ່, ຈຶ່ງໃຫ້ມີສະຕິລະວັງຕົວໃນການທີ່ຈະສແວງຫາພຣະພັກພຣະເຈົ້າແລະເພິ່ງອີງພຣະອົງໃຫ້ນຳພາພວກເຮົາເຮັດທຸກສິ່ງເພື່ອຈະໄດ້ໄປເຖິງຣາຊອານາຈັກຂອງພຣະອົງດ້ວຍກັນກັບຜູ້ເຊື່ອຄົນອື່ນໆ .

| |
|---|
| ແມ້ແຕ່ການບໍຣິຫານຢູ່ໃນໂບດຂອງພວກເຮົາບາງທີກໍໄດ້ອາສັຍເພິ່ງອີງໃສ່ຄວາມສາມາຂອງຜູ້ນຳ, ການຈັດຕັ້ງ, ອີງໃສ່ແຜນການທີ່ໄດ້ວາງໄວ້, ແລະຄວາມສາມາດຂອງພວກເຮົາເອງໃນການປ່ຽນແປງການດຳເນີນຊີວິດແຕ່ລະວັນ. |

ດ້ວຍພຣະຄຸນແລະຄວາມຮັກພຣະເຈົ້າໄດ້ຊົງເລືອກທີ່ຈະປະທານບຸດຊາຍໃຫ້ແກ່ອັບຣາຮາມເພື່ອໃຫ້ຄຳສັນຍາທີ່ພຣະອົງໄດ້ມີໃຫ້ໄວ້ນັ້ນເກີດຜົນສຳເຣັດ. ພຣະອົງຈະຊົງປະທານພຣະພອນໂດຍຜ່ານບຸດຊາຍທີ່ຈະເກີດນຳນາງຊາຣາ. ອັບຣາຮາມໄດ້ຫົວຂວັນແຕ່ຕອນທີແລກ, ແຕ່ພຣະເຈົ້າໄດ້ຢຸດການຫົວຂວັນນັ້ນໂດຍບອກໃຫ້ຕັ້ງຊື່ລູກຊາຍວ່າ ອີຊາກ ຊຶ່ງແປວ່າ " ຫົວຂວັນ."

ນາງຊາຣາໄດ້ກາຍເປັນແມ່ຂອງຊົນຊາດແລະເຈົ້າຊີວິດທັງຫມົດ. ເພາະຕັ້ງແຕ່ຊີວິດໜຸ່ມສາວຈົນເຖິງເຖົ້າແກ່ນາງຊາຣາກໍມີຄວາມທຸກຂົມຂື່ນຍ້ອນນາງບໍ່ມີລູກຫຼືເປັນແມ່ທີ່ໃຫ້ກຳເນີດແກ່ລູກບໍ່ໄດ້. ພຣະເຈົ້າໄດ້ໃຫ້ຄຳສັນຍາທີ່ຈະປະທານລູກໃຫ້ແກ່ນາງເພື່ອທີ່ຈະເຮັດໃຫ້ສັນຍານັ້ນໄດ້ເກີດຜົນສຳເຣັດຢ່າງບໍຣິບູນ. ທີ່ຄົນທັງຫຼາຍຄິດວ່າເປັນໄປບໍ່ໄດ້ສຳລັບຜົວເມັຽທີ່ເຖົ້າແກ່ແລ້ວຄູ່ນີ້, ພຣະເຈົ້າຈຶ່ງເຮັດໃຫ້ມະນຸດເກີດມີຄວາມອັສຈັນຄືເຮັດໃຫ້ທຸກສິ່ງເປັນໄປຢ່າງມີລະບຽບແບບແຜນແລະສົມບູນຄືພຣະອົງໄດ້ເອີ້ນຄູ່ນີ້ໃຫ້ໄປເກີດຜົນຕາມທີ່ພຣະອົງໄດ້ສັນຍາໄວ້ໃນ ( ໂຣມ: 8: 28 ) ເຖິງແມ່ນວ່າເຮົາຈະປະສົບກັບຄວາມທຸກຂົມຂື່ນມາກ່ອນກໍຕາມ, ແຕ່ພວກເຮົາກໍຄວນມີຄວາມເຊື່ອແລະໄວ້ວາງໃຈໃນພຣະເຈົ້າວ່າພຣະອົງຈະຊົງປະທານໃຫ້ທຸກສິ່ງເກີດຂຶ້ນຕາມຄຳສັນຍາແລະຕາມຄວາມຕ້ອງການທີ່ຈຳເປັນ. ເພື່ອໃຫ້ຄຳສັນຍາເກີດເປັນຈິງພວກເຮົາຕ້ອງມີຄວາມໝັ້ນໃຈໃນຄຳສັນຍາຂອງພຣະອົງ.

## 2. ຄຳສັນຍາທີ່ມີຣິດອຳນາດຂອງພຣະເຈົ້າ: ( ປຖມກ.18: 10-15 )

ໃນພຣະທັມຕອນນີ້ພຣະເຈົ້າໄດ້ມາຢ້ຽມຢາມອັບຣາຮາມແລະຊາຣາໂດຍສະແດງຜ່ານເທວະດາ 3 ຕົນ ( ປຖມກ. 18-19 ) ຊຶ່ງມີຢູ່ໃນພຣະຄັມພີເດີມ. ຄືພຣະເຈົ້າໄດ້ຕັດຜ່ານເທວະດາ ( ເປັນຜູ້ສົ່ງຂ່າວ ) ຫຼື ເປັນຜູ້ລາຍງານບອກວ່າພຣະເຈົ້າໄດ້ເວົ້າສິ່ງໃດ.

ພຣະເຈົ້າໄດ້ໃຫ້ຄຳສັນຍາກັບອັບຣາຮາມແລະນາງຊາຣາອີກເທື່ອນຶ່ງຄືໃນເວລາດຽວກັນນີ້ໃນປີໜ້າພວກເຂົາທັງສອງຈະໄດ້ລູກຊາຍ. ນາງຊາຣາກໍມີການຕອບສນອງແບບດຽວກັນກັບອັບຣາຮາມແຕ່ເລັ້ມຕົ້ນພຸ້ນ. (ປຖມກ. 17:17)

ນາງຫົວຂວັນຕົວເອງຢູ່ໃນໃຈ. ພຣະເຈົ້າໄດ້ເຮັດໃຫ້ພວກເພິ່ນຫາຍຄວາມສົງສັຍໃນເຣື່ອງຂອງນາງຊາຣາໂດຍຖາມອັບຣາຮາມວ່າແມ່ນຫຍັງທີ່ເຫຼືອກວ່າກຳລັງຣິດອຳນາດຂອງພຣະອົງ.ພຣະເຈົ້າຈະຊົງສຳແດງໃຫ້ເຫັນໃນຣິດອຳນາດໃນຄຳສັນຍາທີ່ພຣະອົງໄດ້ຊົງໃຫ້ໄວ້ໃຫ້ກາຍເປັນຈິງໂດຍທີ່ມະນຸດຄິດບໍ່ເຖິງວ່າຈະເປັນໄປໄດ້ໃນຂໍ້ 15, ນາງຊາຣາໄດ້ປະຕິເສດເພາະຄວາມຢ້ານກົວຕໍ່ຣິດອຳນາດຂອງພຣະເຈົ້າຍ້ອນຄວາມສົງສັຍຂອງນາງເອງ.

ພວກເຮົາກໍອາດຈະຖືກທົດລອງເຫມືອນກັນກັບຜົວເມັຽເຖົ້າຄູ່ນີ້ທີ່ໄດ້ສະແດງອອກມາ. ພວກເຮົາສາມາດເປັນຜູ້ຕັດສິນໃນຄວາມເຊື່ອຂອງເຂົາທັງສອງໄດ້ງ່າຍໃນເຣື່ອງຄວາມເຊື່ອແລະພຣະເຈົ້າທີ່ໄດ້ຮັກສາສັນຍາທີ່ພຣະອົງໄດ້ໃຫ້ໄວ້ຈະເປັນໄປຕາມນັ້ນເພາະພຣະເຈົ້າເປັນຜູ້ມີຣິດອຳນາດສູງສຸດ. ຖ້າສິ່ງນີ້ເກີດຂຶ້ນກັບຕົວເຮົາເອງເຮົາຈະມີປະຕິກິຣິຍາຕອບແນວໃດ? ມີຄວາມໝັ້ນໃຈແນ່ນອນບໍ່? ເພາະພວກເຮົາທັງຫມົດກໍຮູ້ຢູ່ແລ້ວວ່າບໍ່ມີສິ່ງໃດທີ່ພຣະເຈົ້າຈະເຮັດໃຫ້ເປັນໄປບໍ່ໄດ້ ແຕ່ພວກເຮົາກັບພົບຕົວເອງຫຼົງເຊື່ອໃນສິ່ງທີ່ຕາເຫັນຫຼາຍກວ່າຄວາມເຊື່ອໝັ້ນໃນສິ່ງທີ່ຕາບໍ່ເຫັນໃນພຣະເຈົ້າມີບໍ່? ທ່ານມີຄວາມເຊື່ອໃນພຣະເຈົ້າຢ່າງແທ້ຈິງຫຼືວ່າພຣະອົງຈະຊົງຮັກສາສັນຍາທີ່ພຣະອົງຊົງໃຫ້ໄວ້?

*ບໍ່ສາມາດທີ່ຈະຖວາຍ ນຶ່ງສ່ວນສິບໄດ້ແມ່ນບໍ່? ( ອ່ານມັດທາຍ 6: 33.

* ພ້ອມທີ່ຈະໄຖ່(ຮັບ)ເອົາວຽກງານຂອງພຣະເຈົ້າທີ່ມອບໃຫ້ຕົວທ່ານແລ້ວບໍ່? ພສສ 28: 8, ແລະ ພນມ. 2: 10.

* ເຕັມໄປດ້ວຍຄວາມຕື່ນຕົກໃຈແລະຄວາມກັງວົນແມ່ນບໍ່? ອ່ານ ຟລປ. 4: 4-6.

* ທ່ານມີຄວາມຢ້ານກົວທີ່ຈະເປັນພະຍານແກ່ຜູ້ໃດຜູ້ນຶ່ງໃນເຣື່ອງພຣະຄຣິດແມ່ນບໍ່? ມທ. 28: 19-20 ຢຣ: 15: 26-27.

ພຣະເຈົ້າເປັນຜູ້ຊົງມີຄວາມເມດຕາຕໍ່ອັບຣາຮາມ, ແລະຕໍ່ທ່ານເຊັ່ນກັນ. ທ່ານບໍ່ຈຳເປັນຕ້ອງມີຄວາມທຸກກັງວົນຍ້ອນເກີດຄວາມສົງສັຍ. ຈົ່ງຍົກເອົາຈຸດໃດຈຸດນຶ່ງໃນຊີວິດຂອງທ່ານທີ່ພາໃຫ້ເກີດຄວາມສົງໃສແລະເລີ້ມຕົ້ນໃຫມ່ຕັ້ງແຕ່ດຽວນີ້ເພື່ອທ່ານຈະໄດ້ເຊື່ອແລະປະຕິບັດຕາມ. ຈົ່ງສະແດງຄວາມເຊື່ອຂອງທ່ານໃນຣິດອຳນາດແລະຄຳສັນຍາຂອງພຣະເຈົ້າ. ພຣະອົງຈະບໍ່ປະປ່ອຍທ່ານແລະທ່ານກໍຢ່າໄດ້ປະປ່ອຍພຣະອົງ.

ພຣະອົງຈະບໍ່ປະປ່ອຍທ່ານແລະທ່ານກໍຢ່າໄດ້ປະປ່ອຍພຣະອົງ.

## 3. ຄຳສັນຍາທີ່ສັດຊື່ຂອງພຣະເຈົ້າ: ( ປຖມກ. 21: 1-5 )

ຄຳສັນຍາທີ່ພຣະເຈົ້າໄດ້ໃຫ້ໄວ້ກັບອັບຣາຮາມໄດ້ເກີດຂຶ້ນແລະຜ່ານກາຍໄປ, ຄືການເກີດຂອງອີຊາກ, ບໍ່ໄດ້ແມ່ນຄວາມສາມາດຂອງອັບຣາຮາມແລະນາງຊາຣາ ແຕ່ພຣະເຈົ້າເປັນຜູ້ຊົງບັນຊາ.

ມີຫຼາຍຄັ້ງທີ່ພວກເຮົາໄດ້ເກີດຄວາມສັບສົນລະຫວ່າງຄວາມຕ້ອງການຂອງຕົນເອງ ແລະເຮັດຕາມນ້ຳພຣະທັຍພຣະເຈົ້າ. ໂດຍລືມໄປວ່າພວກເຮົາເກີດມາໃນໂລກນີ້ເພື່ອຮັບໃຊ້ພຣະອົງ ແຕ່ມີຄວາມສົນໃຈພຽງວ່າພຣະອົງປະທານໃຫ້ສິ່ງໃດແດ່ເພື່ອໃຫ້ພວກເຮົາພໍໃຈ. ແນ່ນອນພວກເຮົາກໍໄດ້ຮັບພຣະພອນຈາກພຣະອົງຖ້າຫາກວ່າດຳຣົງຊີວິດໄປກັບພຣະອົງດ້ວຍຄວາມເຊື່ອ, ແຕ່ພວກເຮົາເຂົ້າໃຈຜິດຢ່າງຫນ້າອັບອາຍຄືຄິດວ່າພຣະເຈົ້າມີຢູ່ກໍເພື່ອຊ່ວຍພວກເຮົາແລະໃຫ້ພວກເຮົາໄດ້ຮັບຄວາມມ່ວນຊື່ນ. ຖ້າພວກເຮົາຫາກຫຼີກໜີຈາກການຜູກພັນນີ້ແລ້ວ, ພວກເຮົາກໍຈະລືມໄປວ່າ

> ແຕ່ພວກເຮົາເຂົ້າໃຈຜິດຢ່າງຫນ້າອັບອາຍຄືຄິດວ່າພຣະເຈົ້າມີຢູ່ກໍເພື່ອຊ່ວຍພວກເຮົາແລະໃຫ້ພວກເຮົາໄດ້ຮັບຄວາມມ່ວນຊື່ນ.

ທາງພຣະອົງນັ້ນສູງກວ່າທາງຂອງເຮົາ, ແລະຕົວເຮົາເອງກໍຈະກາຍເປັນຜູ້ບອກໃຫ້ພຣະເຈົ້າໃຫ້ເຮັດພາຣະກິດຂອງພຣະອົງໃຫ້ສຳເຣັດ. ມີບາງຄັ້ງພວກເຮົາກໍຕັດສິນໃຈເຮັດໄປໂດຍເຂົ້າໃຈຜິດຍ້ອນຄວາມເປັນມະນຸດຂອງພວກເຮົາ. ຂໍໃຫ້ພວກເຮົາຈົ່ງດຳເນີນຕໍ່ໄປດ້ວຍການຂອບພຣະຄຸນ ທີ່ພຣະເຈົ້າຊົງມີພຣະທັຍເມດຕາແລະອົດທົນທີ່ເຕັມໄປດ້ວຍ

ພຣະຄຸນກັບພວກເຮົາທັງຫຼາຍ. ມີນາງພະຍາບານຜູ້ນຶ່ງບອກກັບຂ້າພະເຈົ້າວ່ານາງເຊົາໄປໂບດແລ້ວເພາະພຣະເຈົ້າໄດ້ປະຖິ້ມນາງແລ້ວ ເພາະນາງໄດ້ອະທິຖານຂໍຕໍ່ພຣະເຈົ້າ ແຕ່ພຣະອົງບໍ່ໄດ້ຕອບນາງເລີຍແລະນີ້ຄືສາເຫດທີ່ນາງໄດ້ຫັນໜ້າໜີຈາກພຣະເຈົ້າໄປ. ຂ້າພະເຈົ້າລືມຖາມນາງເຖິງຂໍ້ພຣະທັມ 1ໂຢຮັນ. 5: 14-15 , ຂ້າພະເຈົ້າສົງສັຍວ່ານາງອາດຈະບໍ່ໄດ້ຊອກແລະບໍ່ໄດ້ເຄາະໃຫ້ຖືກປະຕູສວັນຄືໃນ ( ມທ. 7: 5-8 ) ບໍ່ຕ້ອງເດົາກໍຮູ້ວ່າຄວາມເສັຽໃຈທີ່ນາງມີນັ້ນເລິກເຊິ່ງຂນາດໃດ, ແຕ່ຫຼາຍກວ່ານັ້ນການທົດສອບຄຳສັນຍາຂອງພຣະເຈົ້າຂອງນາງນັ້ນເຫັນວ່າເປັນສິ່ງທີ່ເຜີນໆ.

ພຣະເຈົ້າຊົງຢັ່ງຮູ້ທຸກສິ່ງ, ມີຄວາມຮັກທີ່ຍິ່ງໃຫຍ່, ແລະມີຣິດອຳນາດສູງສຸດ. ພຣະອົງຊົງຮູ້ຈັກໃຈຂອງພວກເຮົາ ແລະບໍ່ພຽງແຕ່ເຫັນຄວາມຕ້ອງການຊົ່ວຄາວຂອງພວກເຮົາ ແຕ່ພຣະອົງຊົງເຫັນຄວາມຕ້ອງການຕາມພຣະປະສົງອັນຕລອດໄປເປັນນິດຂອງພຣະອົງ. ພຣະອົງຊົງມີຄວາມຫ່ວງໃຍເຖິງການຈະເຣີນເຕີບໃຫຍ່ທາງດ້ານຈິດວິນຍານ ແລະການຮັບໃຊ້. ໃນລະຍະເວລາອັນຍາວນານ, ການຕິດສນິດກັບຄວາມຊົມຊື່ນຍິນດີແລະມີສັນຕິສຸກພາຍໃນເປັນສິ່ງດີກວ່າຄວາມສຸກພຽງຊົ່ວຄາວ. ໃນເວລາທີ່ພວກເຮົາປະສົບກັບຄວາມບໍ່ພໍໃຈແລະບໍ່ສາມາດທີ່ຈະເຂົ້າໃຈໃນທິດທາງຂອງພຣະອົງ, ພວກເຮົາສາມາດໄວ້ວາງໃຈໃນຄຳສັນຍາທີ່ພຣະອົງໃຫ້ໄວ້ຢ່າງສັດຊື່ຕໍ່ພວກເຮົາ.

ຜູ້ນຳໃນການສັມມະນາອົບຮົມລະດັບຜູ້ນຳແຫ່ງນຶ່ງ, ໄດ້ເວົ້າກັບຜູ້ຈັດການໜ້າໃໝ່ກ່ຽວກັບການປະເມີນຜົນການທຳງານຂອງພະນັກງານ. ທ່ານໄດ້ເວົ້າຊ້ຳຫຼາຍເທື່ອຄື, " ການກະທຳທີ່ສະແດງອອກມາໃນອະດີດເປັນສິ່ງທີ່ຕັດສິນທີ່ດີທີ່ສຸດສຳລັບອະນາຄົດ " ເພາະວ່າພຣະເຈົ້າໄດ້ຊົງສຳແດງຄວາມສັດຊື່ໃນຄຳສັນຍາມາຕລອດໃນອະດີດ, ພວກເຮົາສາມາດໝັ້ນໃຈໄດ້ວ່າພຣະອົງຈະຊົງຮັກສາຄຳສັນຍາຂອງພຣະອົງໃນປັດຈຸບັນນີ້ແລະຕໍ່ໄປໃນອະນາຄົດ.

ກໍເຫັນແລ້ວວ່າພຣະເຈົ້າໄດ້ປະທານບຸດໃຫ້ແກ່ອັບຣາຮາມແລະນາງຊາຣາໃນຍາມທີ່ພວກເພິ່ນເຖົ້າແກ່ກາຍເວລາທີ່ຈະມີລູກແລ້ວ.

* ເວລາທີ່ພຣະເຈົ້າໄດ້ໃຫ້ຄຳສັນຍາທີ່ຈະປະທານສິ່ງທີ່ພວກເຮົາຕ້ອງການ, ພວກເຮົາກໍຄວນສະແດງຄວາມໝັ້ນໃຈ, ບໍ່ມີຄວາມສົງສັຍ, ບໍ່ວ່າຈະມີສິ່ງໃດເກີດຂຶ້ນກໍຕາມ.

* ເພາະວ່າພຣະເຈົ້າຜູ້ມີຣິດອຳນາດສູງສົ່ງແລະເປັນຜູ້ຍິ່ງໃຫຍ່, ພວກເຮົາຄວນຈະຢຶດເອົາພຣະອົງເປັນທີ່ເພິ່ງແລະເຮັດທຸກສິ່ງຕາມທີ່ພຣະອົງຊົງສັ່ງ.

* ເພາະວ່າພຣະອົງຊົງເປັນຜູ້ສັດຊື່ແລະທ່ຽງທັມໃນອະດີດ, ພຣະອົງກໍຈະຊົງຮັກສາສັນຍາຂອງພຣະອົງຢ່າງນັ້ນໃນປັດຈຸບັນນີ້ ແລະຕລອດໄປເປັນນິດ.

ອຸປຖັມໂດຍ ລາວບັບຕິສສັມພັນ www.lsbf.org